ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 002 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 13 ກຸມພາ 2024

# ລັດຖະບັນຍັດ

**ວ່າດ້ວຍການປັບປຸງມາດຕາ 50 ຂອງລັດຖະບັນຍັດວ່າດ້ວຍ**
**ຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015;
- ອີງຕາມ ລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ມາດຕາ 59;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 05/ຄປຈ, ລົງວັນທີ 05 ມັງກອນ 2024;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 04/ຄປຈ, ລົງວັນທີ 05 ມັງກອນ 2024.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:**

**ມາດຕາ 1 ຈຸດປະສົງ**

ລັດຖະບັນຍັດສະບັບນີ້ ກຳນົດການປັບປຸງມາດຕາ 50 ຂໍ້ ດ ຂອງລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ຊຶ່ງເຂດປ້ອງກັນຄວາມສະຫງົບ ກ່ຽວກັບຄ່າບໍລິການ ການຜະລິດປ້າຍລົດ ເພື່ອໃຫ້ມີງົບປະມານພຽງພໍໃນການຜະລິດປ້າຍລົດ ແນໃສ່ ຮັບປະກັນການບໍລິການຮັບໃຊ້ສັງຄົມ ຢ່າງຕໍ່ເນື່ອງ, ຖືກຕ້ອງ, ສອດຄ່ອງກັບກົດໝາຍ ປະກອບສ່ວນເກັບລາຍ ຮັບເຂົ້າງົບປະມານແຫ່ງລັດ ແລະ ພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການປັບປຸງມາດຕາ 50 ຂໍ້ ດ ກ່ຽວກັບຄ່າບໍລິການ ການຜະລິດປ້າຍລົດ**

ຄ່າບໍລິການ ການຜະລິດປ້າຍລົດ ມີການປັບປຸງ ດັ່ງນີ້:

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| ດ | ການຜະລິດປ້າຍລົດ | | |
| - | ລົດ 2 ລໍ້ | ຄັນ | 75,000 |
| - | ລົດ 3 ລໍ້ | ຄັນ | 110,000 |
| - | ລົດເກັງ, ລົດກະບະ 4 ລໍ້ | ຄັນ | 185,000 |
| - | ລົດບັນທຸກ 6 ລໍ້ ຂຶ້ນໄປ | ຄັນ | 225,000 |

**ມາດຕາ 3 ການປ່ຽນແທນເນື້ອໃນມາດຕາຂອງລັດຖະບັນຍັດ**

ລັດຖະບັນຍັດສະບັບນີ້ ປ່ຽນແທນເນື້ອໃນມາດຕາ 50 ຂໍ້ ດ ຂອງລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

**ມາດຕາ 5 ຜົນສັກສິດ**

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 1 ເມສາ 2024 ພາຍຫຼັງປະທານປະເທດລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

**ທອງລຸນ ສີສຸລິດ**